# ຊາວເມືອງໃໝ່ຕ້າຫຼີ: ດຳລົງຊີວິດຢູ່ເມືອງຕ້າຫຼີ ແລະ ໃຊ້ຊີວິດຢູ່ຮ່ວມກັບຄວາມງາມ



ແຂວງຢຸນນານ ເປັນຈຸດໝາຍປາຍທາງແຫຼ່ງທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມຊົມຊອບທີ່ສຸດຂອງຈີນ. ໃນຊຸມປີຜ່ານມາ, ໄປຄຽງຄູ່ກັບການທ່ອງທ່ຽວເພື່ອສຸຂະພາບ ແລະ ພັກຜ່ອນຢ່ອນອາລົມທີ່ໄດ້ຮັບຄວາມສົນໃຈນັບມື້ນັບຫຼາຍຂຶ້ນ, ມີນັກທ່ອງທ່ຽວຈຳນວນຫຼວງຫຼາຍ ໄດ້ມາສຳຜັດກັບຊີວິດແບບສະບາຍສະບາຍ ຂອງຢຸນນານ ແລະ ຫຼົງໄຫຼໄປກັບວິຖີຊີວິດຂອງແຂວງຢຸນນານ, ບາງເທື່ອເຂົາເຈົ້າໄດ້ດຳລົງຊີວິດຢູ່ແຂວງຢຸນນານ ເປັນເວລາສິບກວ່າວັນ ຫຼື ຫຼາຍເດືອນ ເພື່ອສຳຜັດກັບ “ວິຖີຊີວິດແບບຢຸນນານ”. ຢູ່ເມືອງຕ້າຫຼີ ແຂວງຢຸນນານ, ມີຊາວເມືອງໃໝ່ຕ້າຫຼີເກືອບ 100.000 ຄົນ ທີ່ໄດ້ດຳລົງຊີວິດຢູ່ທີ່ນີ້, ໃນນັ້ນມີເພື່ອນມິດຕ່າງປະເທດຈຳນວນຫຼວງຫຼາຍ. ໃນສາຍຕາຂອງເພື່ອນມິດຕ່າງປະເທດເຫຼົ່ານີ້, ມີເລື່ອງລາວກ່ຽວກັບການຮ່ວມຊີວິດກັບທຳມະຊາດທີ່ສວຍງາມ ແລະ ຊາວເມືອງທີ່ມັກແຂກມັກຄົນຂອງເມືອງຕ້າຫຼີມີຫຍັງແດ່? ພວກເຮົາມາຮັບຮູ້ນຳກັນ!

## “ຂ້ອຍແມ່ນຊາວຕ້າຫຼີ, ບໍ່ແມ່ນຊາວຕ່າງປະເທດ”



"ຢູ່ເມືອງຕ້າຫຼີ, ຂ້ອຍແມ່ນຊາວຕ້າຫຼີ, ບໍ່ແມ່ນຊາວຕ່າງປະເທດ." ທ່ານ ປາຕຣິກ ໄດ້ດຳລົງຊີວິດຢູ່ເມືອງຕ້າຫຼີເປັນເວລາ 6 ປີແລ້ວ, ປັດຈຸບັນ, ທ່ານໄດ້ເຊື່ອມສານເຂົ້າກັບ ຊີວິດທ້ອງຖິ່ນເປັນຢ່າງດີ. "ຄືກັນກັບຢູ່ບ້ານເກີດເມືອງນອນຂອງຂ້ອຍເອງ" ນີ້ຄືຄວາມຮູ້ສຶກຕົວຈິງຢູ່ເມືອງຕ້າຫຼີ ທີ່ຄ້າຍຄືກັບຊາວເມືອງໃໝ່ຕ້າຫຼີອື່ນໆ.

ທ່ານ ປາຕຣິກ ຮູ້ສຶກມັກຮັກ ທຳມະຊາດຕັ້ງແຕ່ນ້ອຍ, ຈົນມາຮອດປັດຈຸບັນ, ທ່ານ ຍັງຈື່ຈຳຄວາມຊົງຈຳທີ່ກ່ຽວກັບທຳມະຊາດ ໃນຍາມໄວເດັກຂອງຕົນ. ສຳລັບທ່ານ ປາຕຣິກ ແລ້ວ "ພູຊາ ແລະ ແມ່ນ້ຳລຳເຊ ຂອງເມືອງຕ້າຫຼີ ແມ່ນສວຍງາມຕະຫຼອດປີ."

"ການເບິ່ງແຍງດູແລລູກແບບມືອາຊີບ ແລະ ເຮັດໄຮ່ເຮັດນາ ເປັນວຽກເສີມໄປພ້ອມ "ນີ້ແມ່ນ ການແນະນຳຕົວເອງຂອງເລກບັນຊີສື່ສັງຄົມອອນລາຍຂອງທ່ານ ປາຕຣິກ. ທ່ານ ປາຕຣິກ ໄດ້ປູກຜັກອິນຊີຢູ່ໃນຟາມ, ໃນເວລາເປີດການໄລສົດ, ບາງຄັ້ງລາວ ຈະລົມກັບຊາວເນັດ ແລະ ຕອບຄຳຖາມກ່ຽວກັບກະສິກຳອິນຊີ. ຈາກບໍ່ເຂົ້າໃຈພາສາຈີນ ຮອດການລົມກັບຊາວເນັດດ້ວຍພາສາຈີນກາງໄດ້ຢ່າງຫຼ່ຽນໄຫຼ, ທ່ານ ປາຕຣິກ ໄດ້ເຊື່ອມສານເຂົ້າກັບຊີວິດຕ້າຫຼີທີ່ສວຍງາມເທື່ອລະກ້າວ.

ນອກຈາກການເຮັດກະສິກຳໃນທຸກມື້ແລ້ວ, ທ່ານ ປາຕຣິກ ຍັງໄດ້ຮຽນຮູ້ກ່ຽວກັບ ກະສິກຳໃນເວລາຫວ່າງ. ທ່ານ ກ່າວວ່າ: ຫວັງວ່າ ໃນອະນາຄົດຊາວໜຸ່ມທັງຫຼາຍ ຈະເຂົ້າໃຈ ແລະ ມັກຮັກຂະແໜງການກະສິກຳຫຼາຍກວ່າເກົ່າ, ທຳມະຊາດແມ່ນມານດາຂອງພວກເຮົາ, ພວກເຮົາ ສາມາດເຕີບໃຫຍ່ຂະຫຍາຍຕົວຢູ່ກັບທຳມະຊາດ ຢ່າງມີສຸຂະພາບແຂງແຮງ.

## “ຂ້ອຍເລົ່າເລື່ອງລາວດ້ວຍອາຫານການກິນ”



ທ່ານ ກິວ ມາຈາກຝຣັ່ງ (ຊື່ຈີນແມ່ນທ່ານສຽວຊິງ), ເປັນນັກຂ່າວ ແລະ ມີກ້ອງ ທີ່ມີປະສົບການມາເປັນເວລາ 20 ປີ, ທ່ານໄດ້ດຳລົງຊີວິດຢູ່ບ້ານພັນຊີ ເມືອງຕ້າຫຼີ ຕັ້ງແຕ່ປີ 2014 ຫຼັງຈາກທ່ານ ໄດ້ດຳລົງຊີວິດຢູ່ນະຄອນຫຼວງປັກກິ່ງ ແລະ ນະຄອນເສິງຕູ່ຂອງຈີນ ເປັນເວລາ 9 ປີ. ໝູ່ບ້ານເຜົ່າປາຍແຫ່ງນີ້ ມີຄວາມງຽບສະຫງົບດີ, ພູຊາງຊານຕັ້ງຢູ່ທາງຫຼັງບ້ານ, ເຮັດໃຫ້ທ່ານ ເກີດມີຄວາມຮູ້ສຶກດີ ຄືໄດ້ດຳລົງຊີວິດ ຢູ່ຕີນພູອານເປສຂອງເອີຣົບ.

ທ່ານ ກິວ ສາມາດເວົ້າພາສາຕ່າງປະເທດໄດ້ 6 ພາສາ ເຊິ່ງລວມທັງພາສາຈີນ ເວົ້າໄດ້ຢ່າງຫຼ່ຽນໄຫຼ. ຢູ່ບ້ານພັນຊີ, ທ່ານ ໄດ້ເລີ່ມຂຽນປຶ້ມບັນທຶກອາຫານການກິນ “Food Memory” ດ້ວຍຊື່ພາສາຈີນ “ສຽວຊິງ” ຂອງທ່ານ ແລະ ເລີ່ມປຸງແຕ່ງອາຫານສ່ວນຕົວ.

ອາຫານສ່ວນຕົວຂອງທ່ານ ບໍ່ມີເມນູອາຫານ, ທ່ານ ສາມາດຮອງຮັບແຂກໄດ້ເຖິງ 2 ໂຕະຕໍ່ອາທິດ, ແຕ່ລະໂຕະຢ່າງໜ້ອຍມີແຂກ 8 ຄົນ ແລະ ຕ້ອງຈອງໄວ້ລ່ວງໜ້າ. ອາຫານທີ່ທ່ານ ກິວ ປຸງແຕ່ງ ມີທັງລົດຊາດຝຣັ່ງ, ລົດຊາດແອສປາຍ ແລະ ລົດຊາດຢຸນນານ, ສ່ວນປະກອບຂອງອາຫານ ກໍອຸດົມສົມບູນທີ່ສຸດ ແລະ ມີການປ່ຽນເລື້ອຍໆ, ສ່ວນຫຼາຍຈະເຮັດໃຫ້ລູກຄ້າມີຄວາມຮູ້ສຶກແປກປະຫຼາດຕໍ່ອາຫານ.

ໃນປຶ້ມບັນທຶກອາຫານການກິນ “Food Memory” ຂອງທ່ານ ກິວ ໄດ້ບັນທຶກອາຫານປະຈຳວັນຂອງທ່ານຕະຫຼອດໄລຍະ 20 ປີຜ່ານມາ, ໃນປຶ້ມດັ່ງກ່າວ ມີຮູບພາບການໃຊ້ຊີວິດຕົວຈິງຂອງທ່ານເອງ, ທ່ານ ມີຄວາມຊົງຈຳທີ່ໜ້າອັດສະຈັນກ່ຽວກັບເລື່ອງລາວຂອງທຸກສະຖານທີ່.

ທ່ານ ກິວ ເວົ້າວ່າ: ເວລາຂ້ອຍແຕ່ງກິນ, ກໍຄືເລົ່າເລື່ອງລາວດ້ວຍອາຫານ. ຂ້ອຍພຽງແຕ່ແຕ່ງອາຫານທີ່ກ່ຽວກັບຊີວິດຂອງຕົນເອງ ເທົ່ານັ້ນ. ປັດຈຸບັນນີ້, ອາຫານຂອງຂ້ອຍປຸງແຕ່ງແມ່ນມີລົດຊາດຂອງຢຸນນານຢ່າງເຂັ້ມຂຸ້ນ, ໝູ່ບ້ານພັນຊີ ແມ່ນດິນແດນ ທີ່ມີຄວາມສະຫງົບສຸກ ແລະ ສາມາດໃຊ້ຊີວິດ ຄ້າຍຄືກັນກັບບ້ານເກີດ.

## “ນີ້ແມ່ນຈິນຕະນາການຂອງຂ້ອຍ ສຳລັບຊີວິດທີ່ດີງາມ”



“ຫຼັງຈາກໄດ້ພິຈາລະນາຢ່າງສຸຂຸມຮອບຄອບແລ້ວ, ຂ້ອຍ ແລະ ເມຍ ໄດ້ເລືອກມາດຳລົງຊີວິດຢູ່ເມືອງຕ້າຫຼີ.” ເມື່ອເວົ້າເຖິງເລື່ອງການດຳລົງຊີວິດຢູ່ເມືອງຕ້າຫຼີ, ທ່ານ ນາທານ ຈອນສ ຜູ້ກໍ່ຕັ້ງຄ້າຍ “Language Orchard” ເມືອງຕ້າຫຼີ ກ່າວວ່າ, ສະພາບການໃຊ້ຊີວິດຢູ່ເມືອງຕ້າຫຼີ ແມ່ນສອດຄ່ອງກັບຈິນຕະນາການຂອງທ່ານ ສຳລັບ “ຊີວິດທີ່ດີງາມ”.

ກ່ອນທີ່ຈະເດີນທາງມາເຖິງເມືອງຕ້າຫຼີ, ທ່ານ ນາທານ ຈອນສ ມາຈາກອາເມຣິກາ ໄດ້ດຳລົງຊີວິດຢູ່ຈີນມາເປັນເວລາ 17 ປີແລ້ວ. ໃນປີ 2019, ທ່ານ ນາທານ ຈອນສ ແລະ ເມຍຂອງທ່ານ ໄດ້ພາລູກສາວ 2 ຄົນ ເດີນທາງມາຮອດນະຄອນຕ້າຫຼີ ແລະ ໃຊ້ເວລາ 6 ເດືອນໃນການສ້າງຄ້າຍ “Language Orchard” ຢູ່ສິ້ນຖະໜົນເອີໄຫ ທີ່ເປັນທາງຫຼວງທີ່ສວຍງາມທີ່ສຸດ. ຢູ່ທີ່ນີ້, ຄົນທັງຫຼາຍ ໄດ້ແລກປ່ຽນກັນດ້ວຍຫຼາຍພາສາ ຢ່າງຈິງໃຈ ແລະ ມີອິດສະຫຼະພາບ, ວັດທະນະທຳຈາກທົ່ວທຸກມູມໂລກໄດ້ຫຼັ່ງໄຫຼເຂົ້າໃນໂລກນ້ອຍໆຂອງເດັກນ້ອຍທັງຫຼາຍ.

“ການສ້າງສະພາບແວດລ້ອມ ທີ່ກະຕຸກຊຸກຍູ້ເຊິ່ງກັນ ແລະ ກັນ ແມ່ນຈຸດສຸມຂອງການສຶກສາ. ເມືອງຕ້າຫຼີ ມີຊີວິດທີ່ປອດໂປ່ງສົດໃສ ແລະ ມີສຸຂະພາບແຂງແຮງ ເຊິ່ງສາມາດອຳນວຍພື້ນທີ່ທີ່ມີອິດສະລະພາບ ແລະ ບໍ່ມີຄວາມຜູກມັດໃຫ້ແກ່ເດັກນ້ອຍທັງຫຼາຍ. ທ່ານ ນາທານ ຈອນສ ຫວັງວ່າ: ເດັກນ້ອຍທັງຫຼາຍ ສາມາດເຕີບໂຕຢູ່ໃນສະພາບແວດລ້ອມທຳມະຊາດ. ໃນໄລຍະພັກຮຽນລະດູໜາວ ແລະ ລະດູຮ້ອນ, ຄ້າຍ “Language Orchard” ກໍໄດ້ກາຍເປັນສວນອຸທິຍານຂອງເດັກນ້ອຍ, ເຂົາເຈົ້າໄດ້ຮຽນຮູ້ດົນຕີ, ສີມືຫັດຖະກຳ, ກິລາ, ກະສິກຳ ແລະ ວິທະຍາສາດທຳມະຊາດໃນເວລາຫຼິ້ນ, ພ້ອມທັງແລກປ່ຽນກັນດ້ວຍຫຼາຍພາສາ.

“ສິ່ງແວດລ້ອມທຳມະຊາດຂອງເມືອງຕ້າຫຼີງາມຫຼາຍ, ຄົນທັງຫຼາຍຢູ່ຮ່ວມກັນຢ່າງກົມກຽວກັນ. ທ່ານ ນາທານ ຈອນສ ກ່າວວ່າ: ຄົນທັງຫຼາຍ ເດີນທາງມາເມືອງຕ້າຫຼີ ກໍເພື່ອການດຳລົງຊີວິດທີ່ມີຄວາມສົດໃສກວ່າເກົ່າ ແລະ ມີສຸຂະພາບທີ່ແຂງແຮງກວ່າເກົ່າ. ສະນັ້ນ, ເຖິງແມ່ນວ່າຄວາມຄິດຂອງແຕ່ລະຄົນ ບາງຄັ້ງຈະມີຄວາມແຕກຕ່າງກັນ, ແຕ່ກໍສາມາດເຂົ້າໃຈກັນ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.

(ສຳນັກຂ່າວສານຊິນຮວາ, ສື່ປະສົມປະສານ ຕ້າຫຼີ ແລະ ອື່ນໆ)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)



**ເນື້ອໃນເພີ່ມເຕີມ:**

ກິ່ງແຂວງປົກຄອງຕົນເອງເຜົ່າປາຍ ຕ້າຫຼີ ຕັ້ງຢູ່ພາກຕາເວັນຕົກຂອງແຂວງຢຸນນານ, ແມ່ນກິ່ງແຂວງປົກຄອງຕົນເອງເຜົ່າປາຍພຽງໜຶ່ງດຽວຂອງຈີນ, ມີເມືອງເກົ່າແກ່ ທີ່ມີຊື່ສຽງທາງປະຫວັດສາດ ແລະ ວັດທະນະທຳຂອງຈີນ 3 ແຫ່ງ ຄື: ເມືອງຕ້າຫຼີ, ເມືອງເວີຍຊານ ແລະ ເມືອງຈຽນຊວນ. ໃນນັ້ນ ເມືອງຕ້າຫຼີ ເປັນເມືອງພຽງໜຶ່ງດຽວຂອງແຂວງຢຸນນານ ທີ່ຖືກຈັດເຂົ້າໃນບັນຊີຕົວເມືອງທີ່ກຽມຈະສ້າງເປັນ “ເມືອງວັດທະນະທຳອາຊີຕາເວັນອອກ”.

(ເວັບໄຊປະຊາຊົນຈີນ)

ynzhanba@163.com
laos.yunnangateway.com